ໂຄງການເຄືອຂ່າຍຂໍ້ມູນທີ່ດິນ
ແລະ ຊັບພະຍາກອນທຳມະຊາດ

Rights-LINK

ການແກ້ໄຂຂໍ້ຂັດແຍ່ງຂອງປະຊາຊົນ ຕໍ່ກັບທີ່ດິນ ແລະ ເຮືອນ

ຂຽນໂດຍ: ທ້າວ. ສົມສະໜິດ ພູດາວົງ

ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.

http://www.rightslinklao.org

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

VILLAGE FOCUS INTERNATIONAL

ບ້ານ ໂພນສະຫວັນໃຕ້, ໜ່ວຍ 14, ເຮືອນເລກທີ 207
ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 (0)21 312519
ແຟກ: +856 (0)21 315841

ອົງການບ້ານຈຸດສຸມສາກົນ (VFI)

ອົງການຄຸ້ມຄອງທີ່ດິນແຫ່ງຊາດ (NLMA)

ສະໜັບສະໜູນທຶນໂດຍ: ອົງການເພື່ອການພັດທະນາ ແລະ ການຮ່ວມມື
ແຫ່ງປະເທດສະວິດເຊີແລນ (SDC)

ບົດນຳ

ມີຄະດີຄວາມເລື່ອງໜຶ່ງກ່ຽວກັບຂໍ້ຂັດແຍ່ງໃນກຳມະສິດທີ່ດິນ ແລະ ເຮືອນ ຊຶ່ງມີໂຈດຊື່ວ່າ ນາງ ອຸດອນ ຄຳວົງສາ ຕາງໜ້າໃຫ້ ທ້າວ ສຸດໃຈ ດວງພະຈັນ (ເປັນໂຈດ) ນາງ ແຂກ ຈຳນົງພານິດ ແລະ ທ້າວ ໂບ້ (ເປັນຈຳເລີຍ) ຄະດີດັ່ງກ່າວນີ້ເກີດຂຶ້ນ ຢູ່ ບ້ານພັນໝັ້ນ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ.

ຄະດີນີ້ເກີດຂຶ້ນຍ້ອນການຮ້ອງຟ້ອງໃນວັນທີ 18/10/1993 ແລະ ໄດ້ແກ່ຍາວມາຮອດວັນທີ 22/02/2010. ເປັນເວລາ 17 ປີ ໂດຍມີສານຕັດສິນ 7 ຄັ້ງຄື: ສານປະຊາຊົນຂັ້ນຕົ້ນກຳແພງນະຄອນວຽງຈັນ ຕັດສິນ 02 ຄັ້ງ, ສານປະຊາຊົນສູງສຸດ. ຂັ້ນລົບລ້າງ ຕັດ ສິນ 01 ຄັ້ງ, ສານປະຊາຊົນສູງສຸດ ຂັ້ນຕິດຕາມກວດກາຕັດສິນ 02 ຄັ້ງ, ອົງການໄອຍະການປະຊາຊົນອອກຄຳຕົກລົງສະເໜີ ຄັດຄ້ານ 02 ຄັ້ງ, ສະພາເຂດໜຶ່ງນະຄອນຫຼວງວຽງຈັນ ມີຄຳເຫັນ 01 ຄັ້ງ ແລະ ສະພາແຫ່ງຊາດ ມີຄຳເຫັນ 02 ຄັ້ງ.

ກໍລະນີສຶກສານີ້ຈະນຳສະເໜີກ່ຽວກັບບັນຫາຄວາມຂັດແຍ່ງກຳມະສິດທີ່ດິນ ແລະ ເຮືອນລະຫວ່າງປະຊາຊົນດ້ວຍກັນ. ທັງນີ້ຈຸດປະສົງໃນກໍລະນີສຶກສາຄັ້ງນີ້, ແມ່ນເພື່ອສຶກສາກ່ຽວກັບການຕັດສິນຄະດີຂອງສານແຕ່ລະຂັ້ນວ່າມີຄວາມຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງຄະດີ ແລະ ສອດຄ່ອງຕາມລະບຽບກົດໝາຍແລ້ວ ຫຼື ບໍ່ ?.

ສາລະບານ

ບົດນຳ	I
ສາລະບານ.	III
ຄວາມເປັນມາ.	1
ບັນຫາທີ່ເກີດຂຶ້ນ.	2
ຄຳຖາມ.	9
ການວິເຄາະບັນຫາ.	9
ສະຫຼຸບ.	10
ຂໍ້ສະເໜີແນະ.	10

1. ຄວາມເປັນມາ.

ເຮືອນ ແລະ ດິນດັ່ງກ່າວແມ່ນໃນເບື້ອງຕົ້ນເປັນດິນເຮືອນມູນຂອງ ນາງ ຈູມມາລີ ຊຶ່ງໄດ້ຮັບມອບຈາກ (ພໍ່,ແມ່) ຄື ນາງ ແດງ ທອງຈັນ ໃນວັນທີ 8/11/67. ທີ່ບ້ານພັນໝັ້ນ ຊຶ່ງມີພະຍານ 03 ຄົນຄື: ທິດສີ, ທິດວັນນາ ແລະ ທິດຈັນ, ທັງສາມທ່ານຢູ່ບ້ານພັນໝັ້ນເອງ.

ມາຮອດວັນທີ 22 ເດືອນ 10 ປີ 1968 ໄດ້ມີການຊື້ຂາຍດິນ ແລະ ເຮືອນຕອນດັ່ງກ່າວໃຫ້ທ້າວສຸດໃຈ ໂດຍໄດ້ເຮັດບັນທຶກການຊື້-ຂາຍຕໍ່ໜ້າພະຍານ 03 ທ່ານຄື: 1. ທ້າວ ຄຳມາ, 2. ທ້າວ ຝຸ່ນ, 3. ທ້າວ ພູແກ້ວ ຢູ່ບ້ານພັນໝັ້ນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ໃນຄັ້ງວັນທີ 22/10/1968 ໃນມູນຄ່າທັງໝົດ 2.800.000 ກີບ (ສອງລ້ານແປດແສນກີບ). ພາຍຫຼັງຈາກການ ຊື້ເຮືອນໄດ້ໄລຍະ 01 ປີ. ທ້າວ. ສຸດໃຈ ຖືກຍົກຍ້າຍລົງໄປຢູ່ປາກເຊ ຕາມໜ້າທີ່ການງານ ຈຶ່ງໄດ້ ມອບດິນ ແລະ ເຮືອນຕອນດັ່ງກ່າວ ໃຫ້ ປ້າດີ ຜູ້ເປັນເອື້ອຍ ເປັນຜູ້ອາໄສເບິ່ງແຍງ ແລະ ປົກປັກຮັກສາ. ຫຼັງຈາກນັ້ນປີ 1980 ນາງ ດີ ແມ່ນໄດ້ໂຕນໜີໄປຕ່າງປະເທດ ແລະ ທ້າວ ສຸດໃຈ ຈຶ່ງໄດ້ບອກໃຫ້ນາງ ຄຳໄພ ຊຶ່ງເປັນຫຼານສາວຄົງ ໄດ້ມາຢູ່ເບິ່ງແຍງຕໍ່ຈົນຮອດປີ 1988 ຜູ້ກ່ຽວໄດ້ໄປປ່ວຍຢູ່ຕ່າງປະເທດເລີຍມອບໃຫ້ນ້ອງຊາຍທ້າວ ຄຳມອນ ດວງພະຈັນ ເຂົ້າຢູ່ແທນ, ຈົນຮອດປີ 1991 ທ້າວ ຄຳມອນກໍເສຍຊີວິດ ແລະ ກໍເລີຍບໍ່ມີໃຜຢູ່ຈົນຮອດປັດຈຸບັນ.

ແຕ່ໃນຊ່ວງນີ້ເອງ ນາງ ແຂກ ຊຶ່ງເປັນລູກລ້ຽງຂອງ ນາງດີ ຜູ້ເປັນເອື້ອຍຂອງ ທ້າວ ສຸດໃຈ ທີ່ຢູ່ເຮືອນ ອີກຫຼັງໃນເຂດບ້ານດຽວກັນໄດ້ອ້າງວ່າ ເປັນເຮືອນຂອງຕົນເອງເລີຍໃຫ້ກຳມະກອນທີ່ເຮັດວຽກໃຫ້ຜູ້ກ່ຽວເຂົ້າ ພັກເຊົ່າ ໃນຖານະຄວາມເປັນເຈົ້າຂອງໃນດິນ ແລະ ເຮືອນຕອນດັ່ງກ່າວ.

ພາຍຫຼັງຈາກນາງ ແຂກ ໄດ້ເຂົ້າຄອບຄອງຊັບສິນດັ່ງກ່າວ ເປັນໄລຍະເວລາ 02 ປີ. ທ້າວສຸດໃຈ ຈຶ່ງໄດ້ເດີນທາງຂຶ້ນມາຢາມພີ່ນ້ອງ ແລະ ຜູ້ກ່ຽວຈຶ່ງໄດ້ຮັບຮູ້ວ່າ ດິນ ແລະ ເຮືອນຕອນດັ່ງກ່າວທີ່ເປັນຊັບສິນ ຂອງຕົນເອງ ແມ່ນ ນາງ ແຂກ ໄດ້ນຳໃຊ້ ແລະ ຄອບຄອງໄປແລ້ວ. ສະນັ້ນ, ເມື່ອເຫັນສະພາບເປັນຄືແນວ ນັ້ນ ຜູ້ກ່ຽວຈຶ່ງໄດ້ແຕ່ງຕັ້ງຜູ້ຕ່າງໜ້າເພື່ອທຳການຮ້ອງຟ້ອງເອົາຊັບສົມບັດຂອງຕົນຄືນ ໂດຍການແຕ່ງຕັ້ງ ນາງ ອຸດອນ ຄຳວົງສາ ເປັນຜູ້ດຳເນີນຄະດີແທນຕົນ ເພື່ອຮ້ອງຟ້ອງ ນາງ ແຂກ ຂຶ້ນສານຕໍ່ກັບຄະດີຂໍ້ຂັດແຍ່ງກ່ຽວ ກັບທີ່ດິນ ແລະ ເຮືອນ ທີ່ຢູ່ບ້ານພັນໝັ້ນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ.

ຫຼັງຈາກປະກອບສຳນວນເອກະສານ ແລະ ຄຳຮ້ອງຟ້ອງໄດ້ຄືນໄປຍັງສານຂັ້ນຕົ້ນ ນະຄອນ ຫຼວງ ວຽງຈັນ, ສານໄດ້ຮັບສຳນວນຄະດີ ໃນວັນທີ 18/10/1993 ແລະ ໄດ້ນຳມາພິຈາລະນາຕັດສິນຕ່າງໆດັ່ງລາຍ ລະອຽດດັ່ງນີ້:

ໃນສຳນວນຄະດີ ທີ່ ນາງ ອຸດອນ ຄຳວົງສາ ຊຶ່ງເປັນຕົວແທນໃຫ້ແກ່ທ້າວ ສຸດໃຈ ດວງພະຈັນ ເພື່ອ ຮ້ອງຟ້ອງ ນາງ ແຂກ ແມ່ນມີຄຳຮ້ອງຄື: ສະເໜີໃຫ້ທ່ານ ປະທານສານປະຊາຊົນນະຄອນຫຼວງວຽງຈັນ ຄົ້ນ ຄວ້າພິຈາລະນາຕັດສິນຕາມກົດໝາຍ ໂດຍ ມີ ຈຸດປະສົງຄື: 1. ຂໍ ໃຫ້ທາງສານ ຈົ່ງ ໃຊ້ ມາດ ຕະ ການ ເດັດ ຂາດ ອອກ ຄຳ ສັ່ງ ອາ ຍັ ດ ເຮືອ ນ ແ ລ ະ ດ ິ ນ ດັ ່ ງ ກ ່ າ ວ ໄ ວ້ ເ ປ ັ ນ ກ ຳ ມ ະ ສ ິ ດ , ໂ ດ ຍ ໃ ຫ ້ ບ ້ ານ ພ ັ ນ ໝ ັ ້ ນ ເ ປ ັ ນ ຜ ູ ້ ປ ົ ກ ປ ັ ກ ຮ ັ ກ ສ າ ໄ ວ ້ ໃ ນ ເ ວ ລ າ ຟ ້ ອ ງ ຮ ້ ອ ງ ກ ັ ນ . 2. ນ າ ງ ແ ຂ ກ ຕ ້ ອ ງ ຍ ິ ນ ຍ ອ ມ ແ ລ ະ ມ ອ ບ ສ ົ ່ ງ ເ ຮ ື ອ ນ ແ ລ ະ ດ ິ ນ ດ ັ ່ ງ ກ ່ າ ວ ໃ ຫ ້ ຂ ້ າ ພ ະ ເ ຈ ົ ້ າ ໂ ດ ຍ ບ ໍ ່ ມ ີ ເ ງ ື ່ ອ ນ ໄ ຂ ໃ ດ ໆ . 3. ນ າ ງ ແ ຂ ກ ຈ ະ ຕ ້ ອ ງ ເ ສ ຍ ຄ ່ າ ປ ່ ວ ຍ ການ ແ ລ ະ ຮ ັ ບ ຜ ິ ດ ຊ ອ ບ ຕ ໍ ່ ກ ົ ດ ໝ າ ຍ ໃ ນ ຖ ານ ະ ປ ອ ມ ແ ປ ງ ເ ອ ກ ະ ສ ານ . (ຄ່ າ ປ ່ ວ ຍ ການ ຫ ຼ ື ເ ສ ຍ ເ ວ ລ າ 2.000.000 ກ ີ ບ , ສ ອ ງ ລ ້ ານ ກ ີ ບ) ຮ ຽ ນ ມ າ ດ ້ ວ ຍ ຄ ວ າ ມ ເ ຄ ົ າ ລ ົ ບ ຢ ່ າ ງ ສ ູ ງ .

ພາຍຫຼັງຮັບຄຳຮ້ອງฟ້ອງດັ່ງກ່າວສານໄດ້ສົ່ງໃຫ້ແກ່ ນາງແຂກ ເພື່ອແກ້ຄຳຮ້ອງฟ້ອງນັ້ນ ໂດຍຜູ້ກ່ຽວໄດ້ສະເໜີມາຍັງສານ. ຕາມເອກະສານສະບັບ ລົງວັນວັນທີ 5/10/94, ໂດຍອ້າງວ່າ: ຂ້າພະເຈົ້າເຫັນວ່າໜັງສືຊື້ຂາຍສະບັບລົງວັນທີ 20/10/68 ຂອງທ້າວ ສຸດໃຈ ເປັນໜັງສືທີ່ບໍ່ສາມາດມີຄຸນຄ່າທາງດ້ານກົດໝາຍໄດ້. ເພາະໜັງສືສັນຍາຊື້ຂາຍດັ່ງກ່າວ, ບໍ່ໄດ້ຖືກນຳເອົາໄປຂຶ້ນທະບຽນ ໃຫ້ຖືກຕ້ອງຕາມກົດໝາຍແຕ່ຢ່າງໃດ, ພາຍຫຼັງທ້າວສຸດໃຈມີການຊື້ຂາຍ ດິນ ແລະ ເຮືອນ ດັ່ງກ່າວແຕ່ປີ 1968 ມາເຖິງປີ 1975 ຜູ້ກ່ຽວມີເວລາທີ່ຈະນຳໜັງສືດັ່ງກ່າວໄປຂຶ້ນ ທະບຽນ ແຕ່ຜູ້ກ່ຽວເປັນຫຍັງບໍ່ຈັດຕັ້ງ ປະຕິບັດ, ເພາະໄລຍະເວລາໃນການຊື້-ຂາຍແມ່ນມີເຖິງ 7 ປີ ເຕັມ.

ນອກຈາກນັ້ນ, ການຊື້-ຂາຍດິນ ແລະ ເຮືອນຕອນດັ່ງກ່າວ ເຫັນວ່າ ໜັງສືຕາດິນ ຫຼື ໃບທະ ບຽນຕາດິນ.ມັນແມ່ນໃບທະບຽນຕາດິນທີ່ໄດ້ໂອນກຳມະສິດຈາກນາງ ຈູມມາລີ ທີ່ເປັນເຈົ້າຂອງເດີມ ມາເປັນຊື່ຂອງຂ້າພະເຈົ້າ (ນາງ ແຂກ) ແລະ (ທ້າວ ໂບ້) ຜູ້ເປັນສາມີນານມາແລ້ວ (ແຕ່ປີ 1972) ກ່ຽວ ກັບດິນ ແລະ ເຮືອນດັ່ງກ່າວ, ຂ້າພະເຈົ້າມີໃບທະບຽນຖືກຕ້ອງຕາມກົດໝາຍ. ແຕ່ໃບຊື້-ຂາຍທີ່ດິນ ແລະ ເຮືອນດັ່ງກ່າວ ສະບັບລົງວັນທີ 18/10/71 ຂອງຂ້າພະເຈົ້າໄດ້ສູນຫາຍໄປຢູ່ທີ່ສຳນວນຄຳຮ້ອງຂໍຂຶ້ນທະບຽນຢູ່ທີ່ນະຄອນ ຫຼວງວຽງຈັນ. ຂ້າພະເຈົ້າຈຶ່ງຂໍສະເໜີມາຍັງທ່ານ ໄດ້ມີຄຳສັ່ງ ແລະ ສົ່ງພະນັກງານສານ ຫຼື ຜູ້ພິພາກສາທີ່ຮັບ ຜິດຊອບຄະດີດັ່ງກ່າວ ລົງສົມທົບເຈົ້າໜ້າທີ່ ທີ່ດິນນະຄອນຫຼວງວຽງຈັນທຳການກວດຄົ້ນຫາ ຢູ່ສະໝຸດເຫຼັ້ມ ທີ 3 ໃບທີ 26 ເລກທີ 199 ລົງ ວັນທີ 29/12/71 ມີຈິງ ຫຼື ບໍ່. ທັງນີ້ກໍພື້ອເພີ່ມຫຼັກຖານພະຍານໃຫ້ຂ້າພະ ເຈົ້າ ວ່າມີກຳມະສິດໃນດິນ ແລະ ເຮືອນ ຫຼັງນີ້ຢ່າງຖືກຕ້ອງຕາມກົດໝາຍ.

ພາຍຫລັງສານໄດ້ຮັບສຳນວນການແກ້ຄຳຮ້ອງฟ້ອງຄະດີ ຈາກນາງ ແຂກ ຈຶ່ງເຫັນວ່າ ທັງສອງ ຝ່າຍຕາງກໍອ້າງກຳມະສິດຂອງຕົນໃນທີ່ດິນ ແລະ ເຮືອນ ຕອນດຽວກັນ. ພ້ອມນັ້ນ, ທັງສອງກໍບໍ່ຍອມໄກ່ເກ່ຍ ເຈລະຈາກັນ ໃນຂັ້ນບ້ານ ແລະ ເມືອງ. ສະນັ້ນ, ສານຈຶ່ງໄດ້ຍົກຄະດີດັ່ງກ່າວຂຶ້ນມາຕັດສິນໃນແຕ່ລະຂັ້ນດັ່ງ ລາຍລະອຽດດັ່ງນີ້:

2. ບັນຫາທີ່ເກີດຂຶ້ນ.

ໃນເບື້ອງຕົ້ນ ສຳນວນຄະດີແມ່ນໄດ້ຖືກຍົກຂຶ້ນໄປຕັດສິນຢູ່ສານປະຊາຊົນນະຄອນຫຼວງວຽງຈັນ ໃນ ຂັ້ນຕົ້ນ ຄັ້ງທີ 1 ໂດຍສານພິຈາລະນາສຳນວນຄະດີດັ່ງນີ້:

ໃນວັນທີ 30/11/1995 ສານປະຊາຊົນນະຄອນຫຼວງວຽງຈັນຂັ້ນຕົ້ນໄດ້ຕັດສິນເລກທີ 219/ຂຕ ບອກว່າ: ໃຫ້ທ້າວ ສຸດໃຈ ດວງພະຈັນ (ໂຈດ) ມີສິດຄອບຄອງນຳໃຊ້ທີ່ດິນ ແລະ ເຮືອນ ບ່ອນທີ່ໂຈດ ແລະ ຈຳເລີຍຂັດແຍ່ງກັນນີ້ ໂດຍວິນິດໄສວ່າ:

ຜ່ານການຄົ້ນຄວ້າເອກະສານ. ບັນດາຫຼັກຖານຕ່າງໆທີ່ມີຢູ່ໃນສຳນວນຄະດີ ແລະ ອີງຕາມ ຜົນການໄຕ່ສວນໃນທີ່ປະຊຸມສານແລ້ວເຫັນວ່າທີ່ດິນ ແລະ ເຮືອນ ທີ່ໂຈດ ແລະ ຈຳເລີຍຂັດແຍ່ງກັນ ນີ້ສານພິຈາລະນາຕາມມາດຕາ 28 ຂອງກົດໝາຍວ່າດ້ວຍກຳມະສິດ ຊຶ່ງໄດ້ລະບຸໄວ້ວ່າ ”ກຳມະສິດ ອາດຈະໄດ້ມາຕາມສັນຍາກ່ອນການມອບ ຫຼື ການຮັບຊັບສິ່ງຂອງນັ້ນກໍ່ໄດ້” ເຖິງແມ່ນຝ່າຍໂຈດຍັງ ບໍ່ທັນໄດ້ຂຶ້ນທະບຽນທີ່ດິນ ແລະ ເຮືອນຫຼັງດັ່ງກ່າວກໍຕາມ, ແຕ່ຝ່າຍໂຈດໄດ້ມີສັນຍາຊື້ຂາຍທີ່ດິນ ແລະ ເຮືອນສະບັບ ລົງວັນທີ 22/10/68 ເຊິ່ງເປັນເອກະສານທີ່ເຊື່ອຖືໄດ້ ແລະ ໃນຕົວຈິງຜູ້ທີ່ ຄອບຄອງ ແລະ ນຳໃຊ້ທີ່ດິນ ແລະ ເຮືອນດັ່ງກ່າວກໍແມ່ນໂຈດ ແລະ ຍາດທີ່ໃກ້ຊິດຂອງໂຈດຕະຫຼອດມາ. ດັ່ງນັ້ນ ສານຈຶ່ງເຫັ ນວ່າຄຳຮ້ອງฟ້ອງຂອງໂຈດມີເຫດຜົນຈຶ່ງເຫັນຄວນພິຈາລະນາໃຫ້ແກ່ ທ້າວ ສຸດໃຈ (ໂຈດ) ມີສິດຄອບຄອງ

ແລະ ນຳໃຊ້ທີ່ດິນ ແລະ ເຮືອນບ່ອນທີ່ໂຈດ ແລະ ຈຳເລີຍຂັດ ແຍ່ງກັນນີ້.

ການທີ່ຝ່າຍນາງ ແຂກ (ຈຳເລີຍ) ໄດ້ອ້າງວ່າ ໄດ້ຊື້ທີ່ດິນ ແລະ ເຮືອນດັ່ງກ່າວໄດ້ມານຳນາງ ຈູມມະ ລີ ຕາມສັນຍາຊື້ຂາຍສະບັບລົງວັນທີ 18/10/1971 ແລ້ວ ຈຶ່ງໄດ້ຂຶ້ນທະບຽນອອກໃບຕາດິນ ສະບັບ ເລກທີ 321 ເຫຼັ້ມທີ 3 ສະໝຸດຕາແສງ ເມືອງສີສັດຕະນາກ ລົງວັນທີ 17/04/72 ດ້ວຍຄຳຊີ້ແຈງ ຂຶ້ນທະບຽນທີ່ດິນ ສະບັບລົງວັນທີ 14/01/72 ນັ້ນ, ເມື່ອສານພິຈາລະນາແລ້ວເຫັນວ່າບໍ່ມີເຫດຜົນພຽງພໍດ້ວຍ ວ່າຝ່າຍຈຳເລີຍບໍ່ສາມາດນຳເອົາສັນຍາ ຊື້ຂາຍທີ່ດິນ ແລະ ເຮືອນ ສະບັບດັ່ງກ່າວມາສະເໜີຕໍ່ສານໄດ້ ແລະ ຕາມໃບຢັ້ງຢືນສະບັບເລກທີ 09/ທດ,ກພ ລົງວັນທີ 6/11/95 ຂອງຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນກໍ ໄດ້ຢັ້ງຢືນວ່າ ສັນຍາຊື້ຂາຍສະບັບລົງວັນທີ 18/10/1971 ນັ້ນແມ່ນບໍ່ເຫັນມີຢູ່ໃນສຳນວນຕາດິນ. ນອກນັ້ນ, ຕາມຄຳຊີ້ແຈງຂໍ້ຂຶ້ນທະບຽນ ທີ່ດິນສະບັບລົງ ວັນທີ 14/01/72 ຂອງຈຳເລີຍກໍໄດ້ລະບຸໄວ້ວ່າ ໃນທີ່ດິນຕອນ ດັ່ງກ່າວບໍ່ມີອາສັງຫາລິມາຊັບ. ດັ່ງນັ້ນ,ຄຳອ້າງ ແລະ ເອກະສານທີ່ຝ່າຍຈຳເລີຍ ໄດ້ນຳມາສະເໜີຕໍ່ສານນັ້ນ ຈຶ່ງເປັນການເຊື່ອຖືບໍ່ໄດ້ .ສານຈຶ່ງບໍ່ ເຫັນຄວນພິຈາລະນາໃຫ້ ຍ້ອນວ່າດິນ ແລະ ເຮືອນດັ່ງກ່າວ ນາງ ຈູມມະລີ ໄດ້ຂາຍໃຫ້ທ້າວ ສຸດໃຈ ແລ້ວ ນາງ ຈູມມະລີ ຈະບໍ່ມີສິດຂາຍເທື່ອທີສອງອີກ.

ພາຍຫຼັງມີຄຳຕັດສິນຈາກສານນະຄອນຫຼວງວຽງຈັນ. ຂັ້ນຕົ້ນ ເຫັນວ່າ ຝ່າຍຈຳເລີຍ (ນາງ ແຂກ) ແມ່ນບໍ່ມີຄວາມພໍໃຈຕໍ່ຄຳຕັດສິນດັ່ງກ່າວ. ຜູ້ກ່ຽວຈຶ່ງໄດ້ຂຽນຄຳຮ້ອງ, ເພື່ອຂໍໃຫ້ສານນະຄອນຫຼວງວຽງຈັນ ຂັ້ນຕົ້ນ ພິຈາລະນາຄຳຕັດສິນຄືນໃໝ່.

ພາຍຫຼັງໄດ້ຮັບຄຳຮ້ອງຂໍລົບລ້າງຈາກຝ່າຍຈຳເລີຍ (ນາງແຂກ) ສະບັບລົງວັນທີ 02/01/ 1996 ໂດຍອ້າງເຫດຜົນວ່າ: ການປະກອບຄະນະສານຂອງສານຂັ້ນຕົ້ນໄດ້ດຳເນີນໄປໂດຍບໍ່ຖືກຕ້ອງຕາມຂະ ບວນການພິຈາລະນາຄວາມ. ສະນັ້ນ, ສານປະຊາຊົນນະຄອນຫຼວງວຽງຈັນ ໄດ້ຕັດສິນເປັນເທື່ອທີ 02 ສະບັບ ເລກທີ 96-71/ຂຕ ລົງວັນທີ 03/8/1996.

ສານໄດ້ຕົກລົງຕັດສິນວ່າ: ຄຳຮ້ອງຟ້ອງສະບັບລົງວັນທີ 18/10/1993 ຂອງນາງອຸດອນ ຄຳວົງສາຕາງໜ້າ ທ້າວ ສຸດໃຈ (ໂຈດ) ບໍ່ມີເຫດຜົນແມ່ນໃຫ້ຍົກເລີກຄຳຮ້ອງຟ້ອງຂອງໂຈດຖິ້ມ ແລ້ວໃຫ້ ນາງ ແຂກ ຈຳນົງພານິດ (ຈຳເລີຍ) ມີສິດຄອບຄອງນຳໃຊ້ທີ່ດິນ ແລະ ເຮືອນບ່ອນທີ່ໂຈດ ແລະ ຈຳເລີຍຂັດແຍ່ງກັນໂດຍວິນິດໄສວ່າ:

ຜ່ານການຄົ້ນຄວ້າເອກະສານບັນດາຫຼັກຖານຕ່າງໆທີ່ມີຢູ່ໃນສຳນວນຄະດີ ແລະ ອີງຕາມຜົນ ການໄຕ່ສວນໃນທີ່ປະຊຸມສານແລ້ວເຫັນວ່າທີ່ດິນ ແລະ ເຮືອນທີ່ໂຈດ ແລະ ຈຳເລີຍ ຂັດແຍ່ງກັນນີ້ ເຫັນວ່າຈຳເລີຍໄດ້ອ້າງວ່າທີ່ດິນ ແລະ ເຮືອນດັ່ງກ່າວຕົນໄດ້ຊື້ຈາກ ນາງ ຈູມມະລີ ຕາມສັນຍາຊື້ ຂາຍ ແລະ ໃບຢັ້ງຢືນສະບັບເລກທີ 09/ທດ,ກພ ລົງວັນທີ 6/11/95 ກໍໄດ້ຢັ້ງຢືນວ່າ ທີ່ດິນພ້ອມເຮືອນຢູ່ບ້ານພັນໝັ້ນ ເມືອງສີສັດຕະນາກ ກຳແພງນະຄອນວຽງຈັນ ແມ່ນໄດ້ຂຶ້ນທະບຽນເປັນຊື່ ນາງ ແຂກ ແລະ ທ້າວ ໂບ້ ດ້ວຍຕາມສັນຍາຊື້ຂາຍສະບັບລົງວັນທີ 18/10/1971 ການຂຶ້ນທະບຽນໃຫ້ ນາງ ແຂກ ແລະ ທ້າວ ໂບ້ແມ່ນ ໄດ້ປະຕິບັດຕາມຂັ້ນຕອນຂອງການຂຶ້ນທະບຽນທຸກຢ່າງ. ດ້ວຍຄຳຊີ້ແຈງຂໍ້ຂຶ້ນທະບຽນ ທີ່ດິນສະບັບລົງວັນທີ 14/01/72 ໄດ້ປະກາດ 3 ເດືອນ. ຕາມປະກາດສະບັບລົງ ວັນທີ 17/01/72 ເພື່ອຫາຜູ້ຄັດຄ້ານຈົນເຖິງກຳນົດ ແລ້ວ ຈຶ່ງໄດ້ອອກທະບຽນດັ່ງກ່າວ ,ສານຈຶ່ງເຊື່ອໄດ້ວ່າ ເປັນການຂຶ້ນທະບຽນທີ່ດິນຖືກຕ້ອງຕາມໃບຕາດິນ ເລກ ທີ 321 ເຫຼັ້ມທີ 3 ສະຫມຸດ ຕາແສງສີສັດຕະນາກ ລົງວັນທີ 17/04/1972.

ຈາກເຫດຜົນທີ່ກ່າວມາຂ້າງເທິງນີ້ຈຶ່ງເຫັນວ່າ ທີ່ດິນ ແລະ ເຮືອນບ່ອນຂັດແຍ່ງກັນນີ້ເປັນກຳມະ ສິດ

ທີ່ຖືກຕ້ອງຕາມກົດໝາຍຂອງ ທ້າວ ໂບ້ ແລະ ນາງແຂກ (ຈຳເລີຍ).

ຕໍ່ກັບຝ່າຍໂຈດເມື່ອສານພິຈາລະນາຕາມກົດໝາຍເຫັນວ່າໃບຊື້ຂາຍທີ່ດິນ ແລະ ເຮືອນສະບັບ ລົງວັນທີ 22/10/68 ຂອງຝ່າຍໂຈດ ບໍ່ໄດ້ຈົດທະບຽນທີ່ດິນຖືກຕ້ອງຕາມກົດໝາຍ. ສັນຍາສະບັບ ດັ່ງກ່າວ ເປັນເອກະສານທີ່ໃຊ້ບໍ່ໄດ້ທາງດ້ານກົດໝາຍ ແລະ ນອກຈາກນີ້,ແລ້ວໂຈດເອງກໍບໍ່ມີເອກະສານ ຫຼື ຫຼັກ ຖານໃດໆມາຢັ້ງຢືນຕໍ່ສານອີກ. ດັ່ງນັ້ນ, ຕໍ່ຄຳຮ້ອງຟ້ອງຂອງໂຈດ ສານຈຶ່ງບໍ່ເຫັນຄວນ ພິຈາລະນາໃຫ້.

ຕໍ່ກັບຄຳຕັດສິນຂອງສານ ປະຊາຊົນນະຄອນຫຼວງວຽງຈັນ ສະບັບດັ່ງກ່າວ, ນາງ ອຸດອນ ຄຳວົງ ສາມີຄວາມບໍ່ພໍໃຈຈຶ່ງໄດ້ຮ້ອງຂໍໄປຍັງສານປະຊາຊົນສູງສຸດຂັ້ນລົບລ້າງ. ສະບັບລົງວັນທີ 17/08/1996 ແລະ 30/09/1996. ສານປະຊາຊົນສູງສຸດຂັ້ນລົບລ້າງໄດ້ພິພາກສາສະບັບເລກທີ 98-94/ລລ.ພ ລົງວັນທີ 09/06/1998 ບອກວ່າໃຫ້ ທ້າວ ສຸດໃຈ ດວງພະຈັນ (ໂຈດ) ມີກຳມະ ສິດໃນທີ່ດິນ ແລະ ເຮືອນບ່ອນຂັດແຍ່ງກັນນີ້ໂດຍ ວິນິດໄສວ່າ:

ຄະນະສານແພ່ງຂັ້ນລົບລ້າງຂອງສານປະຊາຊົນສູງສຸດໄດ້ຄົ້ນຄວ້າພິຈາລະນາບັນດາຂໍ້ມູນ ຫຼັກຖານ ແລະ ເອກະສານຕ່າງໆໃນສຳນວນຄະດີ ແລະ ໄຕ່ສວນໃນທີ່ປະຊຸມສານ ຄັ້ງວັນທີ 21/02 /1997 ແລ້ວຈຶ່ງລົງຄຳເຫັນດັ່ງນີ້:

- ເຫັນວ່າ,ຄຳຮ້ອງຂໍລົບລ້າງຂອງນາງອຸດອນ ຄຳວົງສາ ຜູ້ຕາງໜ້າ ທ້າວສຸດໃຈ (ໂຈດ) ປະ ຕິບັດສອດຄ່ອງກັບມາດຕາ 67 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງແລ້ວຈຶ່ງເຫັນ ຄວນຮັບເອົາມາພິຈາລະນາ.
- ມີພະຍານທີ່ເປັນບຸກຄົນພື້ນຖານຂອງບ້ານພັນໝັ້ນ ແລະ ມີຄວາມໃກ້ຊິດກັບ ນາງ ຈູມມະລີ ໃຫ້ການຢັ້ງຢືນວ່າ ນາງຈູມມະລີ ໄດ້ຂາຍທີ່ດິນ ແລະ ເຮືອນ ບ່ອນໂຈດ ແລະ ຈຳເລີຍຂັດແຍ່ງກັນນີ້ ໃຫ້ແກ່ທ້າວສຸດໃຈ (ໂຈດ) ຕາມຈົດ ໝາຍບັນທຶກຄຳໃຫ້ການສະບັບລົງວັນທີ 05/12/1996 ຂອງ ນາງຄຳຜົງ, ນາງທອງດີ ແລະ ທ້າວດົ່ມ ວົງສາລີ ເຊິ່ງທັງ 03 ທ່ານ ແມ່ນ ຊຶ່ງເປັນເອື້ອຍ, ອ້າຍຂອງ ນາງຈຸມມະລີ ຊຶ່ງເປັນເຈົ້າຂອງຊັບເດີມ ແລະ ບັນທຶກຄຳໃຫ້ການ ສະບັບ ລົງວັນທີ 09/06/1997 ຂອງ ທ້າວພົ້ວ, ບັນທຶກຄຳໃຫ້ການ ສະບັບລົງ ວັນທີ 21/08/1997 ຂອງ ພໍ່ພົມໂພ ແລະ ບັນທຶກຄຳ ໃຫ້ການສະບັບ ລົງວັນທີ 28/07/1997 ຂອງທ້າວລອຍ ອາດີດຕາແສງ ເມືອງ ສີສັດຕະນາກ. ດັ່ງນັ້ນ, ສານຈຶ່ງເຫັນຄວນເຊື່ອຖືເອົາ.
- ສ່ວນການທີ່ ນາງແຂກ (ຈຳເລີຍ) ອ້າງວ່າ ໄດ້ຊື້ທີ່ດິນ ແລະ ເຮືອນ ຈາກນາງ ຈູມມະລີ ໃນປີ 1971. ແລ້ວກໍ່ໃຫ້ນາງດີ ຜູ້ເປັນແມ່ນ້າອາໄສຢູ່ຊົ່ວຄາວ ແລະ ໃນປີ 1972 ໄດ້ໂອນທະບຽນ ທີ່ດິນເປັນຂອງຕົນເອງ ແລະ ອື່ນໆນັ້ນ, ເມື່ອພິຈາລະນາແລ້ວເຫັນວ່າເປັນການເຊື່ອຖືບໍ່ໄດ້ເນື່ອງຈາກວ່າ ຖ້າເບິ່ງການລະເວລາ ແລ້ວ, ຖ້າຫາກການຊື້ຂາຍຂອງຈຳເລີຍມີຈິງກໍແມ່ນເຮັດຂຶ້ນລຸນຫຼັງຝ່າຍໂຈດ, ທາງດ້ານການຄຸ້ມຄອງປົກ ປັກຮັກສາກໍແມ່ນຝ່າຍໂຈດ, ເປັນຜູ້ເຂົ້າ ອາໄສຕໍ່ເນື່ອງ ກັນມາແຕ່ປີ 1968 ຈົນເຖິງປີ 1992.
- ສ່ວນໃບທະບຽນທີ່ດິນສະບັບເລກທີ 321 ລົງວັນທີ 17/04/1972 ອອກຊື່ຈຳເລີຍນັ້ນ, ກໍເປັນ ເອກ ະສານທີ່ໂອນໃນລະຍະເວລາທີ່ໂຈດອາໄສຢູ່ ເມືອງປາກເຊ ຈຶ່ງບໍ່ສາມາດຮູ້ ແລະ ຄັດຄ້ານໄດ້ ແລະ ອີກປະການໜຶ່ງ, ບຸກຄົນທີ່ມີທີ່ດິນ ແລະ ເຮືອນຢູ່ໃກ້ຄຽງກັບທີ່ດິນ ແລະ ເຮືອນບ່ອນຂັດແຍ່ງກັນນີ້ ກໍ່ໃຫ້ການຢັ້ງຢືນວ່າ ບໍ່ ໄດ້ມີການປະກາດແຕ່ປະການໃດ. ຕາມຄຳໃຫ້ການຂອງ ທ້າວພູວົງ ສະ

ບັບລົງ ວັນທີ 23 ກໍລະ ກົດ, 1997 ແລະ ບັນດາບຸກຄົນທີ່ເປັນອຳນາດການປົກຄອງໃນຄາວກ່ອນກໍໄດ້ ໃຫ້ການວ່າ ການໂອນທະບຽນທີ່ດິນ ແລະ ເຮືອນ ແມ່ນຈຳເລີຍ ໄປສະເໜີຕໍ່ເຈົ້າ ໜ້າທີ່ທະບຽນເອົາເອງໂດຍບໍ່ໄດ້ຜ່ານບ້ານ ແລະ ຕາແສງ ແຕ່ປະການໃດຕາມຄຳໃຫ້ການຂອງ ທ້າວພົ້ວ, ອາດີດ ນາຍບ້ານໆພັນໝັ້ນ ສະບັບລົງ ວັນທີ 09 ມີຖຸນາ 1997, ຄຳໃຫ້ການຂອງທ້າວລອຍ ອາດີດ ຕາແສງສີສັດຕະນາກ ສະບັບລົງວັນທີ 28 ກໍລະກົດ 1997. ສະນັ້ນ ຈຶ່ງເປັນເອກະສານທີ່ເຊື່ອຖືບໍ່ໄດ້ທາງດ້ານ ກົດໝາຍ ແລະ ເຫັນວ່າຄຳກ່າວອ້າງຂອງຈຳເລີຍບໍ່ມີເຫດຜົນ. ດັ່ງນັ້ນ,ຈຶ່ງເຫັນຄວນໃຫ້ໂຈດ ມີກຳມະສິດໃນທີ່ດິນ ແລະ ເຮືອນ ບ່ອນຂັດແຍ່ງ ກັນນີ້ຕາມລະບຽບກົດໝາຍ.

- ຕໍ່ກັບຄຳພິພາກສາຂອງສານປະຊາຊົນສູງສຸດຂັ້ນລົບລ້າງ ນາງແຂກ ຈຳນົງພານິດ ມີຄວາມ ບໍ່ພໍໃຈຈຶ່ງໄດ້ຍື່ນຄຳຮ້ອງຂໍຕິດຕາມກວດກາສະບັບລົງວັນທີ 5/08/1998 ດັ່ງນັ້ນ, ອົງການໄອຍະການປະຊາຊົນສູງສຸດ ຈຶ່ງໄດ້ສະເໜີຄັດຄ້ານຕໍ່ຄຳພິພາກສາ ຂອງສານປະຊາຊົນສູງສຸດ ສະບັບເລກທີ 20/ອອປ ລົງວັນທີ 17/04/2000, ໂດຍອ້າງເຫດຜົນວ່າ: ຜ່ານການຄົ້ນຄວ້າບັນດາຂໍ້ມູນຫຼັກຖານເອກະສານຕ່າງໆທີ່ປະກອບມາໃນສຳນວນຄະດີຢ່າງລະອຽດຖີ່ຖ້ວນ ແລະ ນຳເຂົ້າຜ່ານກອງປະຊຸມວິຊາການ ຂອງອົງການໄອຍະການປະຊາຊົນສູງສຸດ ຄັ້ງວັນທີ 29/2/2000 ແລ້ວມີຄວາມເຫັນເປັນເອກະພາບດັ່ງນີ້:

- ເຫັນວ່າ: ຄຳຮ້ອງຂໍຂອງນາງແຂກ (ຈຳເລີຍ)ວ່າ: ກົດໝາຍວ່າດ້ວຍກຳມະສິດ ມາດ ຕາ 28 ວັກ 2 ໄດ້ກຳນົດຈະແຈ້ງວ່າ: ຖ້າສັນຍາມອບຊັບສິ່ງຂອງໃຫ້ບຸກຄົນ ຫຼື ຊັບສິ່ງຂອງນັ້ນຫາກຍັງຈະຕ້ອງໄດ້ຂຶ້ນທະບຽນແລ້ວກຳມະສິດແມ່ນໄດ້ມານັບແຕ່ວັນເວລາທີ່ໄດ້ຂຶ້ນທະບຽນເປັນຕົ້ນໄປເຖິງວ່າຊັບສິ່ງຂອງນັ້ນຈະໄດ້ມອບໃຫ້ແກ່ກັນແລ້ວກໍຕາມ.ບັນຫານີ້ຜ່ານມາທ້າວສຸດໃຈກໍບໍ່ໄດ້ຂຶ້ນໃບຕາດິນ ແລະ ໃບຊື້ຂາຍກໍບໍ່ໄດ້ຈົດທະບຽນຕາມລະບຽບການສະນັ້ນເອກະ ສານຊື້ຂາຍຂອງ ທ້າວ ສຸດໃຈ, ຈຶ່ງບໍ່ມີຄຸນຄ່າທາງດ້ານກົດໝາຍແຕ່ກົງກັນຂ້າມນາງແຂກກັບໄດ້ຂຶ້ນໃບຕາດິນຖືກຕ້ອງຕາມຂັ້ນຕອນທຸກຢ່າງແຕ່ສານພັດວ່າບໍ່ມີຄຸນຄ່າທາງດ້ານກົດໝາຍ. ສິ່ງນີ້ແມ່ນມີເຫດຜົນພຽງພໍທາງດ້ານກົດໝາຍເນື່ອງຈາກວ່າພາຍຫຼັງ ນາງແຂກ ແລະທ້າວ ໂບ້(ຜົວເມັຍ) ໄດ້ຊື້ດິນ ແລະ ເຮືອນດັ່ງກ່າວຕາມສັນຍາຊື້ຂາຍ ສະບັບລົງວັນທີ 18/10/1971 ຊຶ່ງເຫັນໄດ້ຈາກໃບຕາດິນເລກທີ 133/111, ລົງວັນທີ 9 ພະຈິກ 1967 ຂອງ ນາງຈູມມະລີ ທີ່ໄດ້ໂອນໃຫ້ເປັນກຳມະສິດຂອງນາງແຂກ ແລະ ທ້າວ ໂບ້ ກໍໄດ້ຂຶ້ນທະບຽນ ໃບຕາດິນຕາມໃບຕາດິນ ເລກທີ 321 ລົງວັນທີ 17 ເມສາ 1972, ໂດຍຖືກຕ້ອງຕາມຂັ້ນຕອນຂອງການອອກໃບຕາດິນທຸກຢ່າງ ຊຶ່ງຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນປະຈຳນະຄອນຫຼວງວຽງຈັນກໍໄດ້ຢັ້ງຢືນຕາມໃບຢັ້ງຢືນສະ ບັບເລກທີ 177/ທດ-ກພ ລົງວັນທີ 30 ກັນຍາ 1996 ວ່າການຂຶ້ນທະບຽນອອກຕາດິນ ໃຫ້ນາງແຂກ ແລະ ທ້າວ ໂບ້ ໃນເລກທີ 321 ເຫຼັ້ມທີ 3 ສະມຸດຕາແສງ, ເມືອງສີສັດຕະນາກ ລົງວັນທີ 17/4/1972 ຖືກຕ້ອງຕາມລະບຽບການຂອງການຂຶ້ນທະບຽນທຸກຢ່າງ,ສ່ວນສັນຍາຊື້ຂາຍ ສະບັບລົງວັນທີ 18 ຕຸລາ 1971 ນັ້ນມີຈິງ, ແຕ່ປະຈຸບັນຖືກເສຍຫາຍ.ຈາກເຫດຜົນທີ່ກ່າວມາຂ້າງເທິງນີ້ຈຶ່ງຍັ້ງຢືນໄດ້ວ່າ ການໄດ້ມາເປັນກຳມະສິດດິນ ແລະ ເຮືອນດັ່ງກ່າວຂອງ ນາງ ແຂກ ແລະ ທ້າວ ໂບ້ ແມ່ນຖືກຕ້ອງຕາມມາດຕາ 28 ວັກ 2 ຂອງກົດໝາຍ ວ່າ ດ້ວຍກຳມະສິດ ເຖິງວ່າໃບ ໜັ ງສືຊື້ຂາຍຈະຖືກເສຍຫາຍກໍຕາມ ອຳນາດລັດ ທີ່ກ່ຽວຂ້ອງກໍໄດ້ຢັ້ງຢືນວ່າ ມີຈິ່ງ ແລະ ຖືກຕ້ອງ.

- ເຫັນວ່າ: ໜັ ງສືສັນຍາຊື້ຂາຍສະບັບລົງວັນທີ 22/10/1968 ທີ່ນາງອຸດອນ (ໂຈດ) ໄດ້ນຳມາເປັນຫຼັກຖານວ່າທ້າວສຸດໃຈໄດ້ຊື້ດິນ ແລະ ເຮືອນທີ່ຂັດແຍ່ງກັນນີ້ຈາກນາງຈູມມະລີ ນັ້ນ ເມື່ອຄົ້ນຄວ້າເບິ່ງແລ້ວ.ເຫັນວ່າເອກກະສານດັ່ງກ່າວໃຊ້ການບໍ່ໄດ້ຖ້າຈະເບິ່ງທາງດ້ານກົດ

ໝາຍ,ເພາະເອກກະສານດັ່ງກ່າວບໍ່ໄດ້ຈົດທະບຽນຕາມລະບຽບການຂອງທີ່ດິນ ແລະ ກໍບໍ່ໄດ້ຂຶ້ນທະບຽນໃບຕາດິນໃນໄລຍະຕໍ່ມາ. ເຖິງວ່າທ້າວສຸດໃຈຈະໄດ້ຊື້ແທ້ຈິ່ງກໍຕາມຈະບໍ່ຖືວ່າ ທ້າວສຸດໃຈໄດ້ມາເປັນກຳມະສິດໂດຍຖືກຕ້ອງ,ເພາະການໄດ້ມາບໍ່ຖືກຕ້ອງຕາມເງື່ອນໄຂຂອງມາດຕາ 28 ວັກ 2 ຂອງກົດໝາຍວ່າດ້ວຍກຳມະສິດ. ນອກຈາກນີ້,ຢູ່ໃນໜັງສືຊື້ຂາຍສະບັບລົງວັນທີ 22/10/1968 ຍັງມີພິລຸດຫຼາຍອັນທີ່ບໍ່ຈະແจ້ງເຊັ່ນ: ເຄົ້າມູນ ກຳມະສິດ ຂອງຜູ້ຂາຍວ່າໄດ້ກຳມະສິດມາດ້ວຍການຊື້ຂາຍລົງວັນທີ 18/11/67 ຈົດທະບຽນທີ່ວຽງຈັນວັນທີ9/11/1967ເປັນການຈົດທະບຽນກ່ອນການຊື້ຂາຍເປັນການບໍ່ຖືກຕ້ອງ, ແຕ່ໃນຕົວຈິງຄົ້ນມູນກຳມະສິດຂອງຜູ້ຂາຍ (ນາງ ຈູມມະລີ) ພັດໄດ້ມາຈາກໜັງສືສືບມູນມໍລະດົກ ສະບັບ ລົງວັນທີ 8/11/1967 ແລະ ໃບຮັບເງິນສະບັບລົງວັນທີ 20/3/1968 ແລະ 7/5/1968 ລາຍເຊັນຂອງ ນາງ ຈູມ ມະລີ ກໍລ້ວນແຕ່ແຕກຕ່າງກັນທັງໝົດ.

- ເວລາໄດ້ຜ່ານໄປນັບແຕ່ມື້ທຳການຮ້ອງຟ້ອງ ແລະ ຮອດມື້ທຳການຕັດສິນຂອງສານປະຊາຊົນສູງສຸດຂັ້ນຕົດຕາມກວດກາເປັນເວລາຜ່ານໄປ 7 ປີ. ແລ້ວສານປະຊາຊົນສູງສຸດຂັ້ນຕົດຕາມກວດພິພາກສາເທື່ອທີ 1 ເລກທີ 00-20/ຕກ.ພ ລົງວັນທີ 09/08/2000 ບອກວ່າ:ສະເໜີຄັດຄ້ານດັ່ງກ່າວບໍ່ມີເຫດຜົນພິພາກສາລົບລ້າງຄຳສະເໜີຄັດຄ້ານດັ່ງກ່າວຂອງໄອຍະການປະຊາຊົນຖິ້ມແລ້ວ ພິພາກສາຢັ້ງຢືນເອົາຕາມຄຳພິພາກສາ ສະບັບເລກທີ 98-94/ ລລ.ພ ລົງວັນທີ 9/06/1998 ຂອງສານປະຊາຊົນສູງສຸດ ຂັ້ນລົບລ້າງທຸກຂໍ້ຄວາມ. ໂດຍວິນິດໄສວ່າ: ຄະນະປະທານສານປະຊາຊົນສູງສຸດໄດ້ຄົ້ນຄວ້າພິຈາລະນາຂໍ້ມູນຫຼັກຖານ ແລະ ເອກະສານຕ່າງໆ ທີ່ມີຢູ່ໃນສຳນວນຄະດີເລື່ອງນີ້ແລ້ວເຫັນວ່າ.

- ການທີ່ ທ້າວສຸດໃຈ (ໂຈດ) ທວງເອົາທີ່ດິນ ແລະ ເຮືອນບ່ອນຂັດແຍ່ງກັນນີ້. ເມື່ອພິຈາລະນາແລ້ວເຫັນວ່າມີເຫດຜົນ, ເນື່ອງຈາກວ່າທີ່ດິນບ່ອນຂັດແຍ່ງກັນນີ້, ເດີມເປັນກຳມະສິດ ຂອງນາງ ຈູມມະລີ ຕາມໜັງສືມອບມູນມໍລະດົກ ສະບັບລົງວັນທີ 08/11/1967 ແລະ ໃບຕາ ດິນສະບັບເລກທີ 133/111, ໃນປີ 1968 ນາງຈູມມະລີ ໄດ້ຂາຍທີ່ດິນ ແລະ ເຮືອນດັ່ງ ກ່າວໃຫ້ແກ່ ທ້າວສຸດໃຈ ຕາມໜັງສືຊື້ຂາຍສະບັບລົງວັນທີ 22/10/1968 ເມື່ອຊື້ແລ້ວ ທ້າວ ສຸດໃຈ ກໍໃຫ້ພີ່ນ້ອງເປັນຜູ້ອາໄສຕະຫຼອດມາ ຊຶ່ງບັນດາພະຍານທີ່ເປັນຄົນພື້ນຖານບ້ານພັນໝັ້ນໄດ້ຢັ້ງຢືນວ່າ ນາງຈູມມະລີ ໄດ້ຂາຍດິນ ແລະ ເຮືອນ ດັ່ງກ່າວໃຫ້ແກ່ທ້າວສຸດໃຈແທ້ ຕາມຄຳໃຫ້ການສະບັບ. ລົງວັນທີ 5/12/1996 ຂອງນາງຄຳຜົງ, ນາງທອງດີ ແລະ ທ້າວດົ່ມ ວົງສາສີ (ເອື້ອຍອ້າຍຂອງນາງຈູມມາລີ), ສະບັບລົງວັນທີ 09/06/1997 ຂອງພໍ່ ພົມໂພ, ສະບັບລົງວັນທີ 28/97/1997 ແລະ ສະບັບລົງວັນທີ 14/06/2000 ຂອງທ້າວລອຍ ອາດີດຕາງແສງສີສັດຕະນາກ ແລະ ຜ່ານມາກໍແມ່ນຍາດພີ່ນ້ອງຂອງທ້າວສຸດໃຈເປັນຜູ້ຄຸ້ມຄອງນຳ ໃຊ້ຕະຫຼອດມາ.ສະນັ້ນ, ຈຶ່ງຖືວ່າທີ່ດິນ ແລະ ເຮືອນບ່ອນຂັດແຍ່ງກັນນີ້ເປັນກຳມະສິດຂອງທ້າວສຸດໃຈ ຈຶ່ງເປັນການຖືກ ຕ້ອງ ແລະ ສອດຄ່ອງມາດຕາ 37 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ, ການທີ່ນາງ ແຂກ (ຈຳເລີຍ) ອ້າງວ່າໄດ້ຊື້ທີ່ດິນ ແລະ ເຮືອນ ຈາກນາງ ຈູມມະລີນັ້ນ,ເມື່ອພິຈາລະນາແລ້ວເຫັນວ່າເປັນການກ່າວອ້າງທີ່ເຊື່ອຖືເອົາບໍ່ໄດ້ເນື່ອງຈາກວ່ານາງ ແຂກ ບໍ່ມີໜັງສືຊື້ຂາຍມາຢັ້ງຢືນພໍໃຫ້ສານເຊື່ອ ຖືເອົາໄດ້, ເຖິງແມ່ນມີໜັງສືຊື້ຂາຍຄືຈຳເລີຍອ້າງມານັ້ນ, ໜັງສືຊື້ຂາຍດັ່ງກ່າວ ກໍໃຊ້ບໍ່ໄດ້ທາງດ້ານກົດໝາຍ ເນື່ອງ ຈາກວ່າ ນາງແຂກ (ຈຳເລີຍ) ອ້າງວ່າໄດ້ຊື້ທີ່ດິນ ແລະ ເຮືອນດັ່ງກ່າວ ໃນປີ 1971 ແຕ່ກົງກັນຂ້າມທີ່ດິນ ແລະ ເຮືອນດັ່ງກ່າວ ນາງຈູມມະລີ ໄດ້ຂາຍໃຫ້ທ້າວສຸດໃຈ ໃນປີ 1968 ໂດຍມີໜັງສືຊື້ຂາຍຢ່າງຄັກແນ່.ສະນັ້ນຈຶ່ງຖືວ່ານາງ ຈູມມະລີ ໝົດກຳມະສິດໃນຊັບສິນ ນັ້ນແລ້ວ, ກຳມະສິດໄດ້ຕົກເປັນຂອງ ທ້າວ ສຸດໃຈ

ແລ້ວນາງ ຈູມມະລີ ຈະມາຂາຍໃຫ້ນາງ ແຂກ ເປັນເທື່ອທີ 2 ນັ້ນ, ຄົງເປັນໄປບໍ່ໄດ້ ແລະ ໃຊ້ບໍ່ໄດ້ທາງດ້ານກົດໝາຍ, ອີກຢ່າງໜຶ່ງ ຖ້າຫາກວ່ານາງແຂກ ໄດ້ຊື້ແທ້ ນາງແຂກ ພັດບໍ່ໄດ້ເຂົ້າຢູ່ທີ່ດິນ ແລະ ເຮືອນດັ່ງກ່າວກົງກັນຂ້າມບັນດາພະຍານເປັນຄົນບ້ານພັນໝັ້ນກໍ່ໃຫ້ການວ່າບໍ່ເຄີຍເຫັນນາງ ແຂກ ມາຊື້ທີ່ດິນດັ່ງກ່າວ, ມີແຕ່ທ້າວສຸດໃຈ ເປັນຄົນຊື້ ສ່ວນແຜນທີ່ດິນອອກຊື່ ນາງ ແຂກ ນັ້ນກໍເຮັດຂຶ້ນໃນເວລາທີ່ໂຈດບໍ່ຢູ່ຈຶ່ງບໍ່ສາມາດຮູ້ ແລະ ຄັດຄ້ານໄດ້, ອີກປະການໜຶ່ງກໍບໍ່ໄດ້ຕິດປະກາດໃຫ້ຄັດຄ້ານໃນບໍລິເວນທີ່ດິນແຕ່ປະການໃດ. ຕາມບົດບັນທຶກຄຳໃຫ້ການລົງສະບັບວັນທີ 23/07/ 1997 ຂອງ ທ້າວພູວົງ ແລະ ໃນການໂອນທະບຽນທີ່ດິນນັ້ນ ນາງແຂກ ກໍບໍ່ໄດ້ຜ່ານບ້ານ ແລະ ຕາແສງແຕ່ຢ່າງໃດ ຕາມຄຳໃຫ້ການສະບັບລົງວັນທີ 09/06/1997 ຂອງທ້າວພົ້ວ ອະດີດ ນາຍບ້ານພັນໝັ້ນ ແລະ ສະບັບລົງວັນທີ 28/07/1997 ຂອງທ້າວລວຍ ອາດີດຕາແສງ ສີສັດຕະນາກ, ສະນັ້ນຈຶ່ງຖືວ່າທີ່ດິນບ່ອນຂັດແຍ່ງກັນນີ້ເປັນກຳມະສິດຂອງທ້າວສຸດໃຈ.

- ການທີ່ ນາງແຂກ (ຈຳເລີຍ) ແລະ ອົງການໄອຍະການປະຊາຊົນສູງສຸດອ້າງວ່າຈຳເລີຍໄດ້ຊື້ທີ່ດິນ ແລະ ເຮືອນ. ບ່ອນຂັດແຍ່ງກັນນີ້ຕາມໜັງສືຊື້-ຂາຍສະບັບລົງວັນທີ 18/10/1971 ແລະ ຂຶ້ນທະບຽນ ຕາດິນຢ່າງຖືກຕ້ອງນັ້ນ. ເມື່ອພິຈາລະນາແລ້ວ, ເຫັນວ່າ ເປັນການກ່າວອ້າງທີ່ເຊື່ອຖືເອົາບໍ່ໄດ້. ເນື່ອງ ຈາກວ່າ ໜັງສືຊື້-ຂາຍສະບັບລົງວັນທີ 18/10/1971 ຊຶ່ງຈຳເລີຍອ້າງມາ ນັ້ນບໍ່ສາມາດນຳມາຢັ້ງຢືນພໍ ໃຫ້ສານເຊື່ອຖືເອົາໄດ້ ແລະ ການຊື້-ຂາຍຂອງຈຳເລີຍ ດັ່ງກ່າວນັ້ນ, ຖ້າຫາກມີຈິງຄືດັ່ງຈຳເລີຍອ້າງມາ ນັ້ນກໍເຮັດລຸນຫຼັງການຊື້-ຂາຍຂອງໂຈດ, ອີງຕາມມາດຕາ 37 ຂອງກົດໝາຍວ່າ ດ້ວຍການຜູກພັນໃນສັນຍາແລ້ວ, ເມື່ອເຈົ້າກຳມະສິດຫາກ ໄດ້ຂາຍກຳ ມະສິດໃນສິ່ງຂອງໃດໜຶ່ງຂອງຕົນແລ້ວກໍຖືວ່າກຳມະສິດຂອງຜູ້ກ່ຽວໝົດສິ້ນໄປ, ຈະນຳມາຂາຍອີກເປັນເທື່ອທີ 2 ແມ່ນບໍ່ໄດ້. ເຖິງແມ່ນວ່າຜູ້ຊື້ຜູ້ທີສອງຈະໄດ້ຈົດທະບຽນຢ່າງຖືກຕ້ອງກໍຕາມ, ແຕ່ການໄດ້ມາຂອງກຳມະສິດແມ່ນບໍ່ຖືກຕ້ອງຈຶ່ງຖືວ່າ ໃຊ້ບໍ່ໄດ້ທາງດ້ານກົດໝາຍ. ອີກຢ່າງໜຶ່ງເອກະສານຕ່າງໆຂອງຈຳເລີຍທີ່ນຳມາອ້າງນັ້ນ, ກໍມີພິລຸດຫຼາຍອັນ ເປັນຕົ້ນແຜນທີ່ດິນສະບັບລົງວັນທີ 09/10/1971 ເປັນກຳ ມະສິດຂອງນາງແຂກ. ແຕ່ນາງແຂກພັດອ້າງວ່າ ໄດ້ຊື້ຈາກນາງຈູມມະລີໃນວັນທີ 18/10/1971, ເມື່ອສັງເກດ ເບິ່ງເອກະສານແລ້ວ, ນາງແຂກ ມີເຫດຜົນແນວໃດຈຶ່ງໄປຊື້ໃນວັນທີ 18/10/1971 ທັງ ໆທີ່ນາງແຂກເອງມີກຳມະສິດຕາມແຜນທີ່ດິນສະບັບລົງວັນທີ 09/10/1971 ນັ້ນແລ້ວ, ຖ້າຫາກວ່າ ກຳມະສິດໃນຊັບສິນນັ້ນເປັນຂອງ ນາງແຂກ ແທ້ຈິງແລ້ວ ໃນວັນທີ 09/10/1971 ນາງຈູມມະລີ ຈະມາຂາຍໃຫ້ ນາງແຂກ ໃນວັນທີ 18/10/1971 ແມ່ນເປັນໄປບໍ່ໄດ້, ເຖິງຢ່າງນັ້ນກໍຕາມເອກະສານຕ່າງໆຊຶ່ງຈຳເລີຍນຳມາອ້າງນັ້ນ, ແມ່ນເຊື່ອຖືບໍ່ໄດ້ທາງດ້ານກົດໝາຍ. ເພາະທີ່ດິນບ່ອນຂັດແຍ່ງ ກັນນີ້ທ້າວສຸດໃຈ ໄດ້ຊື້ຈາກ ນາງຈູມມະລີ ກ່ອນແລ້ວ, ອີກຢ່າງໜຶ່ງອຳນາດການປົກຄອງບ້ານ ພັນໝັ້ນ ແລະ ພີ່ນ້ອງຂອງ ນາງຈູມມະລີ ກໍໄດ້ຢັ້ງຢືນວ່າ ນາງຈູມມະລີ ໄດ້ເສຍຊີວິດແຕ່ປີ 1969 ຕາມໜັງສືຢັ້ງຢືນສະບັບລົງວັນທີ 11/06/1996 ຈຶ່ງຖືວ່ານາງ ຈູມມະລີ ໄດ້ເສຍຊີວິດກ່ອນແລ້ວຈະມາ ຂາຍທີ່ດິນໃຫ້ ນາງແຂກ ໃນປີ 1971 ນັ້ນແມ່ນເປັນໄປບໍ່ໄດ້ ແລະ ບໍ່ມີເຫດຜົນເລີຍ.

- ການທີ່ອົງການໄອຍະການປະຊາຊົນສູງສຸດໄດ້ອ້າງວ່າຫ້ອງການທີ່ດິນປະຈຳນະຄອນຫຼວງວຽງຈັນ ໄດ້ຢັ້ງຢືນວ່າການຂຶ້ນທະບຽນ, ອອກໃບຕາດິນຂອງ ນາງແຂກ ແມ່ນຖືກຕ້ອງຕາມຂັ້ນຕອນ ແລະ ຕາມລະບຽບການນັ້ນ ເມື່ອພິຈາລະນາແລ້ວເຫັນວ່າ ການຢັ້ງຢືນດັ່ງກ່າວເຊື່ອຖືເອົາບໍ່ໄດ້ ເນື່ອງຈາກ ວ່າການຢັ້ງຢືນແມ່ນເຮັດໃນເວລາທີ່ມີຂໍ້ຂັດແຍ່ງກັນແລ້ວ ແລະ ຜູ້ຢັ້ງຢືນກໍແມ່ນພະນັກງານທີ່ດິນໃນ ເມື່ອກ່ອນ, ອີກຢ່າງໜຶ່ງພະນັກງານທີ່ດິນ ກໍຢັ້ງຢືນວ່າ ບໍ່ມີ ໜັງສືຊື້-ຂາຍ ສະບັບລົງວັນທີ 18/10/1971

ຢູ່ໃນສຳນວນໂດຍອ້າງວ່າເສຍຫາຍ ຊຶ່ງເປັນ ການຍັ້ງຍືນທີ່ບໍ່ມີພາວະວິໄສ ແລະ ເຊື່ອຖືເອົາບໍ່ໄດ້.

- ການທີ່ສານປະຊາຊົນອ້າງວ່າໜັງສືຊື້-ຂາຍສະບັບລົງວັນທີ22/10/1968ທີ່ໂຈດນຳມາເປັນຫຼັກຖານນັ້ນ ໃຊ້ບໍ່ໄດ້ເພາະບໍ່ໄດ້ລົງທະບຽນ ແລະ ຂຶ້ນທະບຽນໃນໄລຍະຕໍ່ມານັ້ນ. ເມື່ອພິຈາລະນາແລ້ວເຫັນວ່າເປັນການກ່າວອ້າງທີ່ເຊື່ອຖືເອົາບໍ່ໄດ້,ເນື່ອງຈາກວ່າໜັງສືຊື້-ຂາຍດັ່ງກ່າວເຖິງຈະບໍ່ໄດ້ຈົດທະບຽນກໍ່ຕາມ, ແຕ່ໜັງສືຊື້-ຂາຍດັ່ງກ່າວ ກໍເຮັດຂຶ້ນຢ່າງຖືກຕ້ອງ ແລະ ມີການຍັ້ງຍືນ ຈາກອຳນາດການປົກຄອງ ແລະ ທ້າວລອຍ ອາດີດຕາແສງ ສີສັດຕະນາກ ກໍໄດ້ຍັ້ງຍືນວ່າຕົນໄດ້ເຊັນໜັງສືຊື້-ຂາຍ ສະບັບລົງວັນທີ 22/10/1968 ແທ້ ແລະ ໜັງສືດັ່ງກ່າວກໍຖືກຕ້ອງຕາມກົດໝາຍຕາມຄຳໃຫ້ການສະບັບລົງວັນທີ 27/07/1997 ແລະ ສະບັບລົງວັນທີ 14/06/ 2000, ສະນັ້ນ, ເຖິງວ່າຈະບໍ່ໄດ້ຈົດທະບຽນກໍບໍ່ພາໃຫ້ກຳມະສິດ ຂອງ ທ້າວ ສຸດໃຈຕົກໄປ ແລະ ຜ່ານ ມາກໍແມ່ນຝ່າຍໂຈດເປັນຜູ້ຄອບຄອງ ແລະ ນຳໃຊ້ຕະຫຼອດມາ.

- ການທີ່ອະທິອົງການໄອຍະການປະຊາຊົນສູງສຸດ ອ້າງວ່າ ທ້າວລອຍ ໄດ້ໃຫ້ການຍັ້ງຍືນວ່າ ໜັງສືຊື້ ຂາຍ ສະບັບລົງວັນທີ 22/10/1968 ແມ່ນລູກສາວຂອງ ທ້າວລອຍ ເຊັນຕາງ ຈຶ່ງຖືວ່າ ໃຊ້ບໍ່ໄດ້ ແລະ ບໍ່ຖືກຕ້ອງຕາມກົດໝາຍນັ້ນ, ເມື່ອພິຈາລະນາແລ້ວເຫັນວ່າເປັນການກ່າວອ້າງທີ່ບໍ່ມີເຫດຜົນ ເນື່ອງຈາກວ່າທ້າວລອຍ ໄດ້ໃຫ້ການຄັ້ງວັນທີ 28/07/1997 ແລະ 14/06/2000 ວ່າ ລາຍເຊັນຢູ່ໃນ ໜັງສືຊື້-ຂາຍ ສະບັບລົງວັນທີ 22/10/1968 ນັ້ນແມ່ນ ລາຍເຊັນຂອງຕົນແທ້, ບາງເທື່ອຕົນບໍ່ຢູ່ ກໍ່ມອບໃຫ້ລູກສາວເຊັນຕາງ ແລະ ຕົນເອງກໍ່ຮັບຮູ້ ແລະ ໃຊ້ໄດ້ຄືຕົນເອງເຊັນ, ຕົນຮັບຮູ້ວ່າໜັງ ສືຊື້ຂາຍສະບັບລົງວັນທີ 22/10/1968 ທີ່ ທ້າວສຸດໃຈ ຊື້ທີ່ດິນ ຈາກ ນາງຈູມມະລີ ນັ້ນ, ຕົນຂໍຍັ້ງຍືນ ວ່າແມ່ນມີຄວາມຈິງ ແລະ ທ້າວ ສຸດໃຈ ໄດ້ຊື້ທີ່ດິນບ່ອນຂັດແຍ່ງກັນນີ້ແທ້,ສ່ວນຈຳເລີຍມາຊື້ນັ້ນຕົນບໍ່ຮູ້ ເພາະບໍ່ເຄີຍເຫັນຈຳເລີຍມາເຊັນໜັງສືຊື້ ຂາຍ ດັ່ງກ່າວຜ່ານຕົນຈັກເທື່ອ.

- ເຫັນວ່າ ຄຳພິພາກສາສະບັບເລກທີ 98-94/ລລ.ພ ລົງວັນທີ 09/06/1998 ຂອງ ສານປະຊາຊົນ ສູງ ສຸດຂັ້ນລົບລ້າງຖືກຕ້ອງ ແລະ ສອດຄ່ອງກັບເຫດການຕົວຈິງ ແລະ ລະບຽບກົດໝາຍແລ້ວຈຶ່ງເຫັນ ຄວນຍັ້ງຍືນເອົາຕາມ.

- ຮອດປີ 2002 ນາງແຂກ ໄດ້ຂຽນໃບຄຳຮ້ອງໄປຍັງ ຫ້ອງວ່າ ການສະພາແຫ່ງຊາດ ຫຼັງຈາກນັ້ນ, ສະພາແຫ່ງຊາດຈຶ່ງໄດ້ມີໜັງສືເລກທີ 28/ຫວກ ລົງວັນທີ 28/06/2002 ຕົກລົງໃຫ້ຈຳເລີຍ ມີສິດຄອບ ຄອງນຳໃຊ້ທີ່ດິນ ແລະ ເຮືອນທີ່ມີຂໍ້ຂັດແຍ່ງກັນ. ແຕ່ບັນຫານີ້ອົງການໄອຍະການປະຊາຊົນສູງສຸດໄດ້ ອອກຄຳສະເໜີຄັດຄ້ານ ເລກທີ 31/ອອປ ລົງວັນທີ 04/09/2002 ແລ້ວສົ່ງຄະດີໃຫ້ສານປະຊາຊົນສູງ ສຸດຂັ້ນຕົດຕາມກວດກາຕັດສິນເປັນຄັ້ງທີ 2 ສະບັບເລກທີ 00-22/ຕກ.ພ ລົງວັນທີ 15/10/2002 ເມື່ອສານປະຊາຊົນສູງສຸດຂັ້ນຕົດ ຕາມກວດກາ ພິຈາລະນາສຳນວນຄະດີຄືນ ໃໝ່ ຈຶ່ງຕົກລົງພິພາກສາ ໃຫ້ຈຳເລີຍມີສິດຄອບຄອງ ນຳໃຊ້ທີ່ດິນທີ່ມີຂໍ້ຂັດແຍ່ງກັນ.

- ຕົກມາໃນວັນທີ 22/11/2002 ນາງອຸດອນ ຄຳວົງສາ ໄດ້ຂຽນຄຳຮ້ອງຫາສະພາ ເຂດໜຶ່ງນະຄອນຫຼວງ ວຽງຈັນ ແລະ ຫ້ອງການສະພາເຂດ 1 ໄດ້ເຮັດໃບນຳສົ່ງເລກທີ 56/ ສພຊ/1 ລົງວັນທີ 17/03/2003 ເພື່ອຕອບ ນາງອຸດອນ ໂດຍມີເນື້ອໃນວ່າ: ເມື່ອ ນາງອຸ ດອນ ຄຳວົງສາ ຫາກບໍ່ພໍໃຈ ຫຼື ມີຂໍ້ມູນສະເໜີໃຫມ່ ກໍຂໍໃຫ້ຮ້ອງຮຽນໄປຍັງສະພາແຫ່ງຊາດ ໂດຍກົງ ແລະ ນາງ ອຸດອນ ກໍໄດ້ຂຽນຄຳຮ້ອງໄປຍັງສະພາແຫ່ງ ຊາດຕາມການແນະນຳຂອງສະພາເຂດໜຶ່ງ,ແຕ່ສະພາແຫ່ງຊາດແມ່ນບໍ່ຮັບຄຳຮ້ອງດັ່ງກ່າວ. ຈົນຮອດປີ 2008 ນາງ ອຸດອນ ຈຶ່ງຂຽນຄຳຮ້ອງຫາສະພາເຂດໜຶ່ງ ຫຼັງຈາກນັ້ນສະພາເຂດໜຶ່ງຈຶ່ງໄດ້ຮັບ ສຳນວນ ຄະດີ ແລະ ເຮັດໃບນຳສົ່ງເລກທີ 64/ຄສຊ/1 ລົງວັນທີ 11/02/2008 ໄປຍັງສະພາແຫ່ງຊາດ.ເພື່ອ

ພິຈາລະນາໂດຍມີເນື້ອໃນວ່າ: ການວິນິດໄສຂອງສານປະຊາຊົນສູງສຸດຂັ້ນຕົດຕາມກວດກາແມ່ນຍົກເອົາຈຸດບົກຜ່ອງຂອງໂຈດມາວິນິດໄສຫຼາຍ, ສ່ວນຈຸດບົກຜ່ອງ ຂອງຈຳເລີຍແມ່ນບໍ່ວິນິດໄສ.

ຈົນເຖິງປີ 2009 ຫ້ອງວ່າ ການສະພາແຫ່ງຊາດຈຶ່ງມີແຈ້ງການເລກທີ 116/ຫສຊ ລົງວັນທີ 01/12/2009 ໂດຍມີເນື້ອໃນວ່າ: ການແກ້ໄຂຄຳຮ້ອງຂໍຄວາມເປັນທຳເຫັນວ່າໝົດອາຍຸຄວາມໃນການຮ້ອງຂໍຄວາມເປັນທຳແລ້ວສະພາແຫ່ງຊາດຈຶ່ງບໍ່ຮັບພິຈາລະນາ ເລີຍ ເຮັດໃຫຄະດີດັ່ງກ່າວຕົກໄປ.

3. ຄຳຖາມ:

1. ເປັນຫຍັງການຕັດສິນຄະດີຂອງສານໃນແຕ່ລະຂັ້ນຈຶ່ງມີຫຼາຍຄັ້ງແທ້?
2. ຄຳຕັດສິນຂອງສານແມ່ນເຮັດໃຫ້ປະຊາຊົນໂດຍສະເພາະຄູ່ກໍລະນີໃນຂໍ້ຂັດແຍ່ງມີຄວາມເພິ່ງພໍໃຈຈາກທັງ 2 ຝ່າຍ ຫຼື ບໍ່?
3. ຍ້ອນສາເຫດໃດ? ຄຳຕັດສິນຂອງສານໃນແຕ່ລະຂັ້ນ ທີ່ຕັດສິນໃນແຕ່ລະຄັ້ງ ຈຶ່ງ ບໍ່ຄ້າຍຄືກັນຈັກຄັ້ງ ທັງທີ່ຂໍ້ມູນທີ່ເປັນອັນດຽວກັນແຕ່ຕົ້ນຈົນຈົບບັນຫາ?

4. ການວິເຄາະບັນຫາ.

ຈາກເຫດການທັງໝົດທີ່ເກີດຂຶ້ນເຮົາສາມາດສັງເກດເຫັນໄດ້ເຖິງບັນຫາຕ່າງໆດັ່ງນີ້:

- ບັນຫາຂໍ້ຂັດແຍ່ງຂອງປະຊາຊົນນີ້,ເປັນບັນຫາຂໍ້ຂັດແຍ່ງກ່ຽວກັບກຳມະສິດໃນຊັບສິນທີ່ເປັນດິນ ແລະ ເຮືອນ ໂດຍປະຊາຊົນ (ຄູ່ກໍລະນີ) ໄດ້ຮຽກຮ້ອງໃຫ້ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງເປັນຜູ້ພິຈາລະນາແກ້ໄຂຕາມລະບຽບກົດໝາຍ.ແຕ່ບັນດາການຈັດຕັ້ງທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນຊຶ່ງສະແດງອອກໃນບັນຫາຄຳຕັດສິນທີ່ເປັນສອງແງ່ທີ່ມີລັກສະນະກັບໄປກັບມາແຕ່ມີເນື້ອໃນກົງກັນຂ້າມກັນຢູ່ຕະຫຼອດ.
- ໃນບັນຫາຂອງການຕັດສິນບໍ່ວ່າຈະເປັນກໍລະນີໃດຖ້າຝ່າຍໃດຝ່າຍໜຶ່ງຫາກຊະນະຄະດີກໍປາສະຈາກບໍ່ໄດ້ເຖິງຄວາມພໍໃຈຕໍ່ຄຳຕັດສິນ ແຕ່ໃນບັນຫານີ້ເຫັນໄດ້ວ່າ ຄຳຕັດສິນມີການປ່ຽນແປງຢູ່ຕະລອດເວລາ. ຖ້າຫາກຝ່າຍໃດຝ່າຍໜຶ່ງຮ້ອງຟ້ອງຂຶ້ນມາຊຶ່ງມັນສະແດງໃຫ້ເຫັນເຖິງການນຳໃຊ້ຫຼັກຖານພະຍານຕາມຄວາມເປັນຈິງກັບການນຳໃຊ້ຫຼັກຖານທາງດ້ານກົດໝາຍທີ່ບໍ່ເປັນເອກະພາບກັນ.
- ນອກຈາກບັນຫາທີ່ກ່າວມາເຮົາຍັງສາມາດເຫັນໄດ້ເຖິງຄວາມບໍ່ເທົ່າທຽມກັນທາງດ້ານຖານະຢູ່ໃນສັງຄົມຊຶ່ງມັນສະແດງອອກຢູ່ບ່ອນວ່າຝ່າຍໂຈດແມ່ນນຳໃຊ້ຍາດຕິພີ່ນ້ອງທີ່ເປັນຊາວບ້ານທົ່ວໄປຂຶ້ນມາຕໍ່ສູ້ຄະດີໂດຍອ້າງອີງໃສ່ຂໍ້ມູນຫຼັກຖານ, ພະຍານຈາກຄວາມເປັນຈິງ ແລະ ຝ່າຍຈຳເລີຍແມ່ນນຳໃຊ້ທະນາຍຄວາມທີ່ຮູ້ລະບຽບກົດໝາຍກວ່າຝ່າຍໂຈດ, ເພື່ອເປັນຕົວແທນຂອງຕົນໃນການຕໍ່ສູ້ຄະດີ ສິ່ງນີ້ອາດມີຜົນ ຫຼື ບໍ່? ຕໍ່ກັບຄຳຕັດສິນຄະດີຄວາມຂອງສານ.

5. ສະຫຼຸບ.

ກໍລະນີສຶກສາກ່ຽວກັບເລື່ອງນີ້ສະແດງໃຫ້ເຫັນເຖິງຂະບວນການແກ້ໄຂຂໍ້ຂັດແຍ່ງຂອງລະບົບສານຍຸຕິທຳໃຫ້ແກ່ປະຊາຊົນກ່ຽວກັບກຳມະສິດໃນຊັບສົມບັດຊຶ່ງເປັນທີ່ດິນ ແລະ ເຮືອນ. ໂດຍເລີ່ມຈາກການຕັດສິນຂອງສານຂັ້ນຕົ້ນ, ສານຂັ້ນອຸທອນ (ລົບລ້າງ), ສານຂັ້ນຕິດຕາມກວດກາຈົນກ້າວໄປເຖິງການແກ້ໄຂບັນຫາຈາກອຳນາດນິຕິບັນຍັດ.

ນອກນັ້ນກໍລະນີສຶກສານີ້ຍັງສະແດງໃຫ້ເຫັນເຖິງ ຄວາມບໍ່ກະຈ່າງແຈ້ງຂອງແຫຼ່ງທີ່ມາເຖິງຂໍ້ມູນຫຼັກຖານ ແລະ ນິຕິກຳກ່ຽວກັບກຳມະສິດຂອງແຕ່ລະຝ່າຍ ທີ່ນຳມາສະເໜີຕໍ່ສານ ເພື່ອພິຈາລະນາຕັດສິນຄະດີ.

6. ຂໍ້ສະເໜີແນະ

ກ່ຽວກັບບັນຫານີ້, ເຫັນວ່າ ຄວນພິຈາລະນາແກ້ໄຂໄປຕາມຂັ້ນຕອນທີ່ກຳນົດໄວ້ໃນມາດຕາ 80 ແລະ 81 ຂອງກົດໝາຍວ່າດ້ວຍທີ່ດິນຂອງ ສປປ ລາວ ຄື: ການແກ້ໄຂບັນຫາ ທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ ແລະ ການແກ້ໄຂບັນຫາທີ່ມີລັກສະນະທາງແພ່ງກ່ຽວກັບທີ່ດິນ.

ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ

ເປົ້າໝາຍຂອງໂຄງການ

ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງ ໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.

ຈຸດປະສົງຂອງໂຄງການ

ເພື່ອສົ່ງເສີມທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມຮັບຮູ້, ຄວາມສາມາດ ແລະ ມີສ່ວນຮ່ວມໃນການປົກສາ ຫາລືກ່ຽວກັບຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເພື່ອໃຫ້ປະຊາຊົນໃນທ້ອງຖິ່ນສາມາດເຂົ້າໃຈໄດ້ ກ່ຽວກັບສິດໃນການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

ໂຄງການດຳເນີນງານ ໂດຍອີງຕາມຫຼັກການດັ່ງຕໍ່ລົງໄປນີ້

- ຄວາມເປັນເຈົ້າການຂອງຄົນລາວ
- ການຍອມຮັບຂໍ້ຕົກລົງວ່າດ້ວຍບົດບາດຍິງ-ຊາຍ ກ່ຽວກັບປະເດັນທີ່ດິນ
- ການຍອມຮັບຂໍ້ຕົກລົງວ່າດ້ວຍຄວາມເປັນຊົນຊາດຊົນເຜົ່າ ແລະ ປະເພນີ ວັດທະນະທຳທ້ອງຖິ່ນ
- ຄວາມເປັນກາງ
- ການເຂົ້າເຖິງຂໍ້ມູນຂ່າວສານຢ່າງເປີດກວ້າງ
- ເຮັດໃຫ້ມີຄວາມຫຼາກຫຼາຍ
- ການມີສ່ວນຮ່ວມ

ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ
ຊັບພະຍາກອນທຳມະຊາດ
ອົງການບ້ານຈຸດສຸມສາກົນ
ຕູ້ ປ.ນ. 4697
ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)21 312519

ອີເມວ: info@rightslinklao.org
www.rightslinklao.org